ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ກອງປະຊຸມຄະນະກຳມະການນະໂຍບາຍເງິນຕາ ຂອງສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ ຄັ້ງທີ 1 ຂອງປີ 2024



ໃນຕອນບ່າຍວັນທີ 07 ມິຖຸນາ 2024 ຄະນະກຳມະການນະໂຍບາຍເງິນຕາ (ຄນງ) (Monetary Policy Committee) ໄດ້ດຳເນີນກອງປະຊຸມຄັ້ງທີ 1 ຂອງປີ 2024 ໂດຍການເປັນປະທານຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ), ປະທານຄະນະກຳມະການນະໂຍບາຍເງິນຕາ, ມີຮອງປະທານຄະນະກຳມະການ, ກຳມະການ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມ ຄນງ ຄັ້ງນີ້ ແມ່ນໄດ້ປະເມີນສະພາບເສດຖະກິດ ແລະ ການຈັດຕັ້ງປະຕິບັດນະໂຍບາຍເງິນຕາໃນໄລຍະ 5 ເດືອນຕົ້ນປີ 2024 ແລະ ກຳນົດທິດທາງການຈັດຕັ້ງປະຕິບັດນະໂຍບາຍເງິນຕາໃນໄລຍະ 7 ເດືອນທ້າຍປີ 2024.

ໃນໄລຍະ 5 ເດືອນຕົ້ນປີ 2024 ເສດຖະກິດ-ການເງິນ ສປປ ລາວ ໄດ້ປະເຊີນກັບຄວາມທ້າທາຍຫຼາຍດ້ານທັງສະພາບຢູ່ສາກົນເຊັ່ນ: ຫຼາຍປະເທດ ຍັງມີອັດຕາເງິນເຟີ້ໃນລະດັບສູງ, ຕະຫຼາດການເງິນຍັງຜັນຜວນ ເຮັດໃຫ້ທະນາຄານກາງຂອງປະເທດທີ່ພັດທະນາແລ້ວ ຍັງສືບຕໍ່ປະຕິບັດນະໂຍບາຍເງິນຕາແບບຮັດກຸມ ໂດຍຮັກສາອັດຕາດອກເບ້ຍນະໂຍບາຍໄວ້ໃນລະດັບສູງ ໂດຍສະເພາະ ທະນາຄານກາງຂອງ ສ. ອາເມຣິກາ; ແລະ ສະພາບຢູ່ພາຍໃນ ສປປ ລາວ ເອງໂດຍສະເພາະຄວາມບໍ່ສົມດູນຂອງລະບົບເສດຖະກິດ, ບັນຫາອັດຕາເງິນເຟີ້ສູງ ແລະ ເງິນກີບອ່ອນຄ່າ; ສະນັ້ນ, ທະນາຄານແຫ່ງ ສປປ ລາວ ຈຶ່ງໄດ້ນຳໃຊ້ເຄື່ອງມືນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມຫຼາຍຂຶ້ນໂດຍໄດ້ປັບເພີ່ມ

ອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ ຈາກ 7,5% ມາເປັນ 8,5% ຕໍ່ປີ; ແລະ ໄດ້ສືບຕໍ່ຮັກສາອັດຕາສ່ວນເງິນແຮຝາກບັງຄັບໄວ້ໃນລະດັບ 8% ສໍາລັບສະກຸນເງິນກີບ ແລະ 10% ສໍາລັບເງິນຕາຕ່າງປະເທດ.






ກອງປະຊຸມໄດ້ຕີລາຄາສະພາບເສດຖະກິດ-ການເງິນໃນໄລຍະ 7 ເດືອນຕໍ່ໜ້າ ຍັງຈະສືບຕໍ່ປະເຊີນກັບສິ່ງທ້າຍທາຍຫຼາຍດ້ານ ຈາກທັງສະພາບຂອງສາກົນຍັງມີຄວາມບໍ່ແນ່ນອນທາງດ້ານການດໍາເນີນນະໂຍບາຍເງິນຕາຂອງຫຼາຍປະເທດ; ລາຄານ້ຳມັນ ແລະ ຕະຫຼາດເງິນຍັງສືບຕໍ່ຜັນຜວນ; ສົມທົບກັບສະພາບພາຍໃນຍັງມີຄວາມກົດດັນຫຼາຍດ້ານ ເຊັ່ນ: ດຸນການຄ້າ, ພັນທະການຊໍາລະກັບຕ່າງປະເທດກົດດັນຕໍ່ອັດຕາແລກປ່ຽນ ກະທົບຕໍ່ອັດຕາເງິນເຟີ້ທີ່ຍັງຢູ່ໃນລະດັບສູງ 25%. ດັ່ງນັ້ນ, ທະນາຄານແຫ່ງ ສປປ ລາວ ຈະສືບຕໍ່ດໍາເນີນນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມໂດຍຄນງ ມີມະຕິ ① ປັບຂຶ້ນອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ ຈາກ 8,5% ຕໍ່ປີ ເປັນ 10% ຕໍ່ປີ; ② ອອກເຄື່ອງມືນະໂຍບາຍເງິນຕາໃນຕະຫຼາດເປີດ; ③ ປັບປຸງອົງປະກອບຂອງເງິນແຮຝາກບັງຄັບ; ④ ສືບຕໍ່ດໍາເນີນນະໂຍບາຍອັດຕາແລກປ່ຽນ ໄປຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ແລະ ⑤ ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດຕາມແຜນທີ່ກໍານົດໄວ້.

**# ຂ່າວ: ກົມນະໂຍບາຍເງິນຕາ.**

**ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນໍາໃຊ້ເງິນກີບ**